ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 0029 /ຫອຄ.ຄພນ

ນະຄອນຫຼວງວຽງຈັນ, ວັນທີ 08 JAN 2016

**ແຈ້ງການ**

ຮຽນ : ທ່ານ ປະທານສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ.

ເລື່ອງ : ສະຫຼຸບສະພາບການເຄື່ອນໄຫວປະຈຳປີ ຂອງສະພາການຄ້າຕ່າງປະເທດ ປະຈຳ ສປປ ລາວ.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງສະພາການຄ້າຕ່າງປະເທດປະຈຳ ສປປ ລາວ ສະບັບເລກທີ 1006/ອຄ, ຄພນ, ລົງວັນທີ 22/05/2015.
- ອີງຕາມ ທິດແນະນຳຂອງລັດຖະມົນຕີຊ່ວຍ ວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ລົງວັນທີ 21/12/2015

ເພື່ອເກັບກຳສະພາບການດຳເນີນທຸລະກິດຂອງຊາວຕ່າງປະເທດ ທີ່ມາດຳເນີນທຸລະກິດຢູ່ໃນ ສປປ ລາວໃຫ້ສອດຄ່ອງຕາມເນື້ອໃນ ຂອງຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງສະພາການຄ້າຕ່າງປະເທດປະຈຳ ສປປ ລາວ ສະບັບເລກທີ 1006/ອຄ,ຄພນ, ລົງວັນທີ 22/05/2015.

ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງທ່ານດັ່ງນີ້:

1. ສະເໜີໃຫ້ສະຫຼຸບ ສະພາບການເຄື່ອນໄຫວປະຈຳປີ ຂອງບັນດາສະພາການຄ້າຕ່າງປະເທດ ປະຈຳ ສປປ ລາວ ຕາມ ທີ່ກຳນົດໄວ້ໃນ ມາດຕາ 17 ໃນຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງສະພາການຄ້າຕ່າງປະເທດປະຈຳ ສປປ ລາວ ສະບັບເລກທີ 1006/ອຄ,ຄພນ, ລົງວັນທີ 22/05/2015;

2. ກວດຄືນບັນດາສະພາການຄ້າຕ່າງປະເທດ ປະຈຳ ສປປ ລາວ ແລະ ສາຂາປະຈຳແຂວງ, ນະຄອນຫຼວງ ທີ່ໄດ້ສ້າງຕັ້ງ ແລະ ເຄື່ອນໄຫວ ກ່ອນຂໍ້ຕົກລົງ ຕາມມາດຕາ 23 ຂອງຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງສະພາການຄ້າຕ່າງປະເທດປະຈຳ ສປປ ລາວ ສະບັບເລກທີ 1006/ອຄ,ຄພນ, ລົງວັນທີ 22/05/2015 ແລະ ແນະນຳໃຫ້ສະພາການຄ້າຕ່າງປະເທດ ດັ່ງກ່າວ ຮີບຮ້ອນ ມາປະກອບເອກະສານຄືນໃໝ່ ຕາມທີ່ກຳນົດໄວ້ໃນມາດຕາ 6.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ.

ຮັກສາການຫົວໜ້າຫ້ອງການ

ໝາຍເຫດ:

ຕິດຕໍ່ພົວພັນ ກົມການຄ້າພາຍໃນ

021 412436, 020 28038440 (ພະແນກ ພຕສ)